ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງໄຊສົມບູນ

ເລກທີ:..974..../ຈຂ.ຊບ

ໄຊສົມບູນ, ລົງວັນທີ:.22..9..2016.

# ຄໍາສັ່ງ

## ວ່າດ້ວຍການເພີ່ມທະວີຄວາມຮັບຜິດຊອບເຝົ້າລະວັງຕໍ່ການປ້ອງກັນ ແລະ ກໍາຈັດຕັກແຕນຝູງໄມ້ປ່ອງ ຢູ່ແຂວງແຂວງໄຊສົມບູນ

ເຖິງ: *ທ່ານ ເຈົ້າເມືອງ 5 ເມືອງ, ບັນດາ ທ່ານ ຫົວໜ້າ ພະແນກການ, ອົງການອ້ອມຂ້າງແຂວງ, ບັນດາ ແລະ ຫົວໜ້າຄະນະຈຸດສຸມກຸ່ມບ້ານ ທີ່ມີຄວາມສ່ຽງຕໍ່ການລະບາດຂອງຕັກແຕນ ໄມ້ປ່ອງ.*

- **ອີງຕາມ** ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນແຫ່ງ ສ ປ ປ ລາວ( ສະບັບປັບປຸງ ) ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015 ພາກທີ III, ໝວດທີ 4, ມາດຕາ 20 ວ່າດ້ວຍພາລະບົດບາດ ສິດ ແລະ ໜ້າທີ່ຂອງ ເຈົ້າແຂວງ, ເຈົ້າຄອງນະຄອນ.
- **ອີງຕາມ** ໃສ່ຄໍາສັ່ງແນະນໍາຂອງນາຍົກລັດຖະມົນຕີ ສະບັບເລກທີ 28/ນຍ, ລົງວັນທີ 16 ສິງຫາ 2016 ວ່າດ້ວຍການເພີ່ມທະວີຄວາມຮັບຜິດຊອບ ຕໍ່ການປ້ອງກັນ ແລະ ກໍາຈັດ ຕັກແຕນຝູງໄມ້ປ່ອງຢູ່ແຂວງພາກເໜືອຂອງ ສປປ ລາວ.
- **ອີງຕາມ** ກົດໝາຍວ່າດ້ວຍການປ້ອງກັນພືດ ສະບັບເລກທີ່ 06/ສພຊ, ລົງວັນທີ່ 09 ທັນວາ 2008.
- **ອີງຕາມ** ໃບສະເໜີຂອງພະແນກກະສິກໍາ ແລະ ປ່າໄມ້ ສະບັບເລກທີ່ 913/ກປຂ.ຊບ,ລົງວັນທີ່ 19/9/2016

ອີງໃສ່ສະພາບທີ່ຕັ້ງພູມສັນຖານ ແລະ ການປ່ຽນແປງຂອງດິນຟ້າອາກາດເຮັດໃຫ້ເກີດມີການລະບາດຂອງຕັກແຕນຝູງໄມ້ປ່ອງ ຢູ່ແຂວງຫຼວງພະບາງ, ແຂວງຫົວພັນ ແລະ ແຂວງຜົ້ງສາລີ ໃນປີ 2015 ຜ່ານມາ ເຊິ່ງໄດ້ສ້າງຄວາມເສຍຫາຍຕໍ່ການປູກເຂົ້າໄຮ່, ສາລີ ແລະ ພືດອື່ນໆຂອງປະຊາຊົນຈໍານວນ 3,651 ຮຕ ກວມເອົາ 112 ບ້ານ, 7 ເມືອງ ແລະ ປະຊາຊົນໄດ້ຮັບຜົນກະທົບມີ 3,359 ຄອບຄົວ, 20,367 ຄົນ. ຕໍ່ສະພາບການດັ່ງກ່າວ, ລັດຖະບານໄດ້ຊີ້ນໍາຄະນະກໍາມະການສະເພາະກິດເພື່ອແກ້ໄຂບັນຫາການລະບາດຂອງຕັກແຕນ ແລະ ໜູຂີ່ຢູ່ແຂວງຫຼວງພະບາງ ແລະ ແຂວງພາກເໜືອ, ພ້ອມດຽວກັນນັ້ນ ກໍ່ໃຫ້ເອົາໃຈໃສ່ການປ້ອງກັນ ແລະ ກໍາຈັດຕັກແຕນຝູງໄມ້ປ່ອງດ້ວຍຫຼາຍວິທີການໂດຍສະເພາະແມ່ນ

ການນຳໃຊ້ພູມປັນຍາຊາວບ້ານເຊັ່ນ: ຈູດເສດພືດຕ່າງໆເພື່ອຂັບໄລ່, ໃຊ້ຕາໜ່າງກວດ ແລະ ເກັບທຳລາຍຖິ້ມ ນອກນີ້ຍັງນຳໃຊ້ຢາປາບສັດຕູພືດທີ່ມີຜົນກະທົບໜ້ອຍຕໍ່ສິ່ງແວດລ້ອມ ສີດພົ່ນຕາມພື້ນທີ່ພົບເຫັນຝູງຕັກແຕນ, ມາຮອດເດືອນພຶດສະພາ ປີ2016 ໄດ້ສຳຫຼວດເຫັນຈຸດວາງໄຂ່ຕັກແຕນເປັນໂຕອ່ອນຈຳນວນ 450 ຈຸດ ກວມເອົາ 188 ບ້ານ ໃນ 14 ເມືອງ, ຖ້າທຽບໃສ່ການສຳຫຼວດຈຸດວາງໄຂ່ໃນເດືອນ 11 ປີ 2015 ເພີ່ມຂຶ້ນ 310 ຈຸດ ຫຼື 3 ເທົ່າຕົວ ມາຮອດປະຈຸບັນໃນເດືອນກໍລະກົດ ນີ້ໄດ້ມີພົ່ນ, ທີ່ຖືກທຳລາຍຈຳນວນ 3,710 ຮຕ, ຄາດຄະເນວ່າການລະບາດຂອງຕັກແຕນຝູງໄມ້ປ່ອງມີທ່າອ່ຽງຈະສືບຕໍ່ຂະຫຍາຍໄປໃນພື້ນທີ່, ເມືອງ, ແຂວງໃກ້ຄຽງອື່ນໆເນື່ອງຈາກວ່າລະບົບນິເວດເໝາະສົມເຊັ່ນ: ພື້ນທີ່ປ່າໄມ້ປ່ອງ, ເຂົ້າໄຮ່, ສາລີ ແລະ ພືດອື່ນໆທີ່ເປັນແຫຼ່ງອາຫານ ແລະ ເປັນເງື່ອນໄຂອຳນວຍໃຫ້ແກ່ການຂະຫຍາຍປະຊາກອນຂອງຕັກແຕນຝູງໄມ້ປ່ອງ.

ການລະບາດຂອງຕັກແຕນຝູງໄມ້ປ່ອງເປັນຜົນກະທົບອັນຮ້າຍແຮງຕໍ່ການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ,ຕໍ່ຄວາມໝັ້ນຄົງທາງດ້ານສະບຽງອາຫານ, ຄວາມສະຫງົບເປັນລະບຽບຮຽບຮ້ອຍໃນສັງຄົມ ໂດຍສະເພາະແມ່ນ ແຂວງໄຊສົມບູນ ທີ່ມີຄວາມສ່ຽງໃນການລະບາດຂອງຕັກແຕນຝູງໄມ້ປ່ອງ.

ສະນັ້ນ, ເພື່ອປ້ອງກັນ, ເຝົ້າລະວັງການລະບາດ ແລະ ກຳຈັດຕັກແຕນຝູງໄມ້ປ່ອງໃຫ້ທັນການ ແລະ ປົກປ້ອງຜົນເສຍຫາຍທີ່ອາດຈະເກີດຂຶ້ນນັ້ນ.

## ເຈົ້າແຂວງໄຊສົມບູນ ອອກຄຳສັ່ງ:

1. ໃຫ້ບັນດາພະແນກການອ້ອມຂ້າງແຂວງ, ທ່ານ ເຈົ້າເມືອງ 5 ເມືອງ ແລະ ຫົວໜ້າຫ້ອງການອ້ອມຂ້າງເມືອງ, ທະຫານ, ຕຳຫຼວດ ຫົວໜ້າຄະນະຈຸດສຸມກຸ່ມບ້ານ, ປະຊາຊົນ ແລະ ຊັ້ນຄົນຕ່າງໆ ເພີ່ມທະວີຄວາມຮັບຜິດຊອບໃນການປ້ອງກັນ ແລະ ກຳຈັດຕັກແຕນຝູງໄມ້ປ່ອງຢູ່ບັນດາທ້ອງຖິ່ນທີ່ມີຄວາມສ່ຽງໃຫ້ເປັນຂະບວນຟົດຟື້ນ.
2. ໃຫ້ແຕ່ງຄະນະກຳມະການສະເພາະກິດເພື່ອກະກຽມເຝົ້າລະວັງ, ປ້ອງກັນການລະບາດຂອງຕັກແຕນສົມທົບກັບພາກສ່ວນທີ່ກ່ຽວຂ້ອງຂັ້ນແຂວງ, ຂັ້ນເມືອງ ເພື່ອໂຄສະນາເຜີຍແຜ່, ປຸກລະດົມທົ່ວປວງຊົນດ້ວຍການປູກຈິດສຳນຶກໃຫ້ການຈັດຕັ້ງຂັ້ນບ້ານ ແລະ ປະຊາຊົນຮູ້ຈັກຜົນຮ້າຍ, ມີສະຕິລະວັງຕົວ ແລະ ເປັນເຈົ້າການໃນການປ້ອງກັນ ແລະ ກຳຈັດຕັກແຕນຝູງໄມ້ປ່ອງດ້ວຍຫຼາຍຮູບການເຊັ່ນ: ພະນັກງານກໍ່ສ້າງຮາກຖານການເມືອງ ແລະ ພັດທະນາຊົນນະບົດ, ຖູອາຈານ, ໂທລະພາບ, ວິທະຍຸ ແລະ ໂທລະໂຄ່ງປະຈຳບ້ານ, ພ້ອມດຽວກັນນັ້ນກໍ່ລາຍງານຂໍ້ມູນຂ່າວສານ ໃນຂະບວນການ, ສະພາບການປ້ອງກັນ ແລະ ກຳຈັດຕັກແຕນຝູງໄມ້ປ່ອງໃນແຕ່ລະທ້ອງຖິ່ນ ໃຫ້ການຈັດຕັ້ງທຸກຂັ້ນ ແລະ ສັງຄົມຮັບຊາບໃຫ້ທັນເວລາ.
3. ໜ້າທີ່ ແລະ ຄາດໝາຍຂອງການປ້ອງກັນ ແລະ ກຳຈັດຕັກແຕນຝູງໄມ້ປ່ອງ ມີດັ່ງນີ້:
   1) ຄາດໝາຍລວມ: ຕ້ອງປຸກລະດົມກຳລັງແຮງສັງລວມທົ່ວຂະແໜງການຂັ້ນແຂວງ, ຂັ້ນເມືອງ, ຊັ້ນຄົນຕ່າງໆ ແລະ ປະຊາຊົນເຂົ້າຮ່ວມກຳຈັດຕັກແຕນຝູງໄມ້ປ່ອງເປັນຕົ້ນໃນເຂດທີ່ມີຄວາມສ່ຽງການ

ລະບາດຂອງຕັກແຕນຝຸງໄມ້ປ່ອງ, ພ້ອມທັງຂົນຂວາຍ ແລະ ຍາດແຍ່ງການສະໜັບສະໜູນຂອງນັກທຸລະກິດພາຍໃນ ແລະ ປະເທດເພື່ອນມິດ, ບັນດາອົງການຈັດຕັ້ງສາກົນເຂົ້າຮ່ວມໃນການປ້ອງກັນ ແລະ ກຳຈັດເພື່ອຈະເຮັດໃຫ້ສະພາບການທີ່ມີຄວາມສ່ຽງຈະລະບາດກັບເຂົ້າສູ່ຄວາມເປັນປົກກະຕິໂດຍໄວ, ມີຄວາມໝັ້ນຄົງທາງດ້ານສະບຽງອາຫານ, ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນ, ທະຫານ, ຕຳຫຼວດ ຢູ່ໃນເຂດພື້ນທີ່ມີຄວາມສ່ຽງຈະລະບາດມີຄວາມສະຫງົບເປັນປົກກະຕິ.

2) ໜ້າທີ່ຈຸດສຸມ:

- ສືບຕໍ່ຕິດຕາມ, ເຝົ້າລະວັງ ພຶດຕິກຳການເຄື່ອນຍ້າຍຝູງ ແລະ ສະຖານທີ່ການວາງໄຂ່ເພື່ອເປັນບ່ອນອີງໃນການກຳນົດມາດຕະການປ້ອງກັນ ແລະ ກຳຈັດ.
- ກະກຽມຝຶກອົບຮົມວິຊາການໃຫ້ແກ່ພະນັກງານວິຊາການຂັ້ນແຂວງ, ຂັ້ນເມືອງກ່ຽວກັບການສຳຫຼວດ, ເຝົ້າລະວັງ ການປ້ອງກັນ ແລະ ກຳຈັດ.
- ສືບຕໍ່ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແລະ ອົງການຈັດຕັ້ງສາກົນທັງພາຍໃນ ແລະ ຕ່າງປະເທດເພື່ອຍາດແຍ່ງການຊ່ວຍເຫຼືອດ້ານທຶນຮອນ, ເຕັກນິກວິຊາການ ແລະ ເຄື່ອງມືອຸປະກອນຮັບໃຊ້ເຂົ້າໃນການປ້ອງກັນ ແລະ ກຳຈັດ.
- ກະກຽມຊຸກຍູ້, ສົ່ງເສີມປະຊາຊົນຟື້ນຟູການຜະລິດເພື່ອທົດແທນພື້ນທີ່ເສຍຫາຍຈາກການລະບາດຂອງຕັກແຕນຝຸງໄມ້ປ່ອງ.

4. ເພີ່ມທະວີຄວາມຮັບຜິດຊອບຂອງພະແນກການ, ອົງການອອ້ມຂ້າງແຂວງ, ບັນດາ ເຈົ້າເມືອງ ແລະ ຫ້ອງການອອ້ມຂ້າງ ເມືອງ ໃນການປະຕິບັດຄຳສັ່ງສະບັບນີ້ໃຫ້ເກີດຜົນເປັນຈິງ:

1) ພະແນກກະສິກຳ ແລະ ປ່າໄມ້ ແຂວງ ໃນຖານະເປັນກຳມະການສະເພາະກິດເພື່ອກະກຽມແກ້ໄຂບັນຫາການລະບາດຂອງຕັກແຕນຝຸງໄມ້ປ່ອງເປັນໃຈກາງ, ເປັນເຈົ້າການສົມທົບກັບພະແນກການ ໂດຍສະເພາະແມ່ນ 5 ເມືອງທີ່ມີຄວາມສ່ຽງເພື່ອກຳນົດແຜນປະຕິບັດງານໄລຍະສັ້ນ ( ທ້າຍປີ 2016 ), ໄລຍະກາງ ( ປີ 2017 ) ແລະ ໄລຍະຍາວ ( ປີ 2018-2020 ) ສ້າງ ແລະ ຈັດຕັ້ງແຜນດັ່ງກ່າວໃຫ້ໄດ້ຮັບຜົນສຳເລັດ.

2) ໃຫ້ ພະແນກກະສິກຳ ແລະ ປ່າໄມ້ ແຂວງ, ພະແນກວິທະຍາສາດ ແລະ ເຕັກໂນໂລຊີ ສຶກສາ, ຄົ້ນຄ້ວາທາງດ້ານວິທະຍາສາດ ຄວາມເປັນມາ, ສາຍເຫດ ແລະ ປັດໃຈເອື້ອອຳນວຍທີ່ພາໃຫ້ເກີດມີການລະບາດຂອງຕັກແຕນຝຸງໄມ້ປ່ອງ ເພື່ອກຳນົດແຜນຍຸດທະສາດ ແລະ ມາດຕະການປ້ອງກັນກຳຈັດໃຫ້ມີປະສິດທິພາບ ແລະ ມີຜົນກະທົບໜ້ອຍຕໍ່ສິ່ງແວດລ້ອມ.

3) ໃຫ້ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໂຄສະນາເຜີຍແຜ່ທາງໂທລະພາບ ແລະ ວິທະຍຸ ແລະ ສື່ສານອື່ນໆ ພ້ອມທັງແນະນຳ ແລະ ໃຫ້ຄວາມຮູ້ທົ່ວໄປທີ່ຖືກຕ້ອງໃຫ້ປະຊາຊົນໃນການເປັນເຈົ້າການປ້ອງກັນ ແລະ ກຳຈັດຕັກແຕນຝຸງໄມ້ປ່ອງ.

4) ໃຫ້ພະແນກການເງິນແຂວງຄົ້ນຄ້ວາ, ຈັດສັນງົບປະມານເພື່ອຈັດຕັ້ງປະຕິບັດວຽກງານການປ້ອງກັນ ແລະ ກຳຈັດຕັກແຕນຝຸງໄມ້ປ່ອງໃຫ້ທັນກັບສະພາບການໃນແຕ່ລະໄລຍະ.

5) ໃຫ້ພະແນກພົວພັນຕ່າງປະເທດປະສານງານກັບອົງການຈັດຕັ້ງສາກົນ ແລະ ບັນດາປະເທດອາຊຽນໃນການແລກປ່ຽນຂໍ້ມູນຂ່າວສານ, ເພື່ອຍາດແຍ່ງເອົາການຊ່ວຍເຫຼືອເຂົ້າໃນການປ້ອງກັນ ແລະ ກຳຈັດຕັກແຕນຝູງໄມ້ປ່ອງ.

6) ໃຫ້ເຈົ້າເມືອງ 5 ເມືອງສືບຕໍ່ເປັນເຈົ້າການຮັບຜິດຊອບຊີ້ນຳ-ນຳພາຈັດຕັ້ງປະຕິບັດ, ພ້ອມທັງປຸກລະດົມກຳລັງແຮງທາງດ້ານທຶນຮອນ, ງົບປະມານກຳລັງພົນ ແລະ ເຄື່ອງມືອຸປະກອນຮັບໃຊ້ເຂົ້າໃນຂະບວນການປ້ອງກັນ ແລະ ກຳຈັດຕັກແຕນຝູງໄມ້ປ່ອງໃນທ້ອງຖິ່ນຂອງຕົນ, ປຸກລະດົມປະຊາຊົນ, ເຝົ້າລະວັງເຂດບ້ານຂອງຕົນທີ່ມີຄວາມສ່ຽງທີ່ຈະລະບາດຂອງຕັກແຕນຝູງໄມ້ປ່ອງ, ພ້ອມດຽວກັນນັ້ນໃຫ້ແຕ່ລະເມືອງແຕ່ງຕັ້ງຄະນະຮັບຜິດຊອບ ຂັ້ນເມືອງ ແລະ ບ້ານ ໃຫ້ແທດເໝາະກັບຄວາມເປັນຈິງ, ການຊີ້ນຳຂັ້ນເມືອງມອບໃຫ້ເຈົ້າເມືອງ ຫຼື ຮອງເຈົ້າເມືອງເປັນຫົວໜ້າຄະນະ.

7) ໃຫ້ບັນດາພະແນກການອອ້ມຂ້າງແຂວງ, ເຈົ້າເມືອງ ແລະ ຫ້ອງການອ້ອມຂ້າງເມືອງ ທີ່ມີພື້ນທີ່ຄວາມສ່ຽງຕໍ່ການລະບາດຂອງຕັກແຕນຝູງໄມ້ປ່ອງ ເປັນເຈົ້າການຕິດຕາມ ແລະ ເຝົ້າລະວັງຢ່າງເປັນປົກກະຕິ, ໃນກໍລະນີພົບເຫັນການເຄື່ອນຍ້າຍ ຫຼື ປະກົດການຕັກແຕນຝູງໄມ້ປ່ອງເຂົ້າມາໃນພື້ນທີ່ຂອງຕົນຕ້ອງຮີບຮ້ອນລາຍງານຕໍ່ຄະນະສະເພາະກິດຂັ້ນເມືອງ ແລະ ແຂວງເພື່ອກຳຈັດ ແລະ ແກ້ໄຂທັນເວລາ.

5. ໃຫ້ຫົວໜ້າພະແນກການ, ອົງການອ້ອມຂ້າງແຂວງ, ຄະນະກຳມະການສະເພາະກິດເພື່ອແກ້ໄຂບັນຫາການລະບາດຂອງຕັກແຕນ ເຈົ້າເມືອງ 5 ເມືອງ ດັ່ງກ່າວ, ກຳແໜ້ນຄຳສັ່ງສະບັບນີ້ ພ້ອມທັງຜັນຂະຫຍາຍອອກເປັນວຽກອັນລະອຽດຕາມຄວາມຮັບຜິດຊອບຂອງຕົນ ແລະ ຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນສູງ.

6. ຄຳສັ່ງສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ເຈົ້າແຂວງໄຊສົມບູນ

ພອຍຄຳ ຮຸ່ງບຸນຍວງ